**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 038/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 12 ພະຈິກ 2024

# ບົດສະຫຼຸບ
# ຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປີ 2024 ປະຈຳເດືອນ ຕຸລາ ປີ 2024 ແລະ ທິດທາງແຜນການໃນເດືອນຕໍ່ໄປ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໄດ້ເອົາໃຈໃສ່ເປັນເຈົ້າການ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ມະຕິກອງປະຊຸມຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ I ປີ 2024 ປະຈຳເດືອນ ຕຸລາ ປີ 2024 ແລະ ແຜນການໃນຕໍ່ໜ້າ ດັ່ງລາຍລະອຽດມີດັ່ງນີ້:

## I. <u>ຜົນການຈັດຕັ້ງປະຕິບັດ ປະຈຳເດືອນ ຕຸລາ ປີ 2024 ແລະ ແຜນການໃນຕໍ່ໜ້າ</u>

❖ **<u>ມະຕິກອງປະຊຸມຕິດພັນກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ</u>**

1. ມອບໃຫ້ ສຄຄຊ ປະສານສົມທົບ ພາກສ່ວນກ່ຽວຂ້ອງ ເພື່ອກະກຽມແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າປະເມີນຮອບດ້ານວຽກງານພັດທະນາຕະຫຼາດທຶນ ແລະ ທົບທວນປັບປຸງຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ເພື່ອກຳນົດທິດທາງ ແລະ ປັບປຸງຮອບດ້ານວຽກງານຕະຫຼາດທຶນ ໂດຍໃຫ້ສຳເລັດພາຍໃນປີ 2024;

   ➢ **ຄວາມຄືບໜ້າ**

   - ສຳເລັດການແຈ້ງລາຍຊື່ທາພາກສ່ວນກ່ຽວຂ້ອງ ທີ່ມອບໃນຄະນະຮັບຜິດຊອບປັບປຸງຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035; ພ້ອມທັງ ໄດ້ສຳເລັດການແຕ່ງຕັ້ງຄະນະອະນຸກຳມະການປັບປຸງຍຸດທະສາດການພັດທະນາຕະຫຼາດທຶນດັ່ງກ່າວ;
   - ສຳເລັດການຈັດກອງປະຊຸມປະຖົມມະລຶກຂອງຄະນະຮັບຜິດຊອບປັບປຸງຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2035 ເພື່ອຄົ້ນຄວ້າປຶກສາຫາລື ແລະ ກຳນົດແບ່ງໜ້າທີ່ໃຫ້ແຕ່ລະພາກສ່ວນຮັບຜິດຊອບ ໃນວັນທີ 08 ພະຈິກ 2024;
   - ສຳເລັດການປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາຕະຫຼາດທຶນຂອງ ສປປ ລາວ (2021-2024) ແລະ ກຳນົດແຜນຈຸດສຸມ 5 ປີ ຕໍ່ໜ້າເບື້ອງຕົ້ນ.

   ➢ **ແຜນການໃນຕໍ່ໜ້າ**

   - ກະກຽມໄປແລກປ່ຽນບົດຮຽນຢູ່ ສສ. ຫວຽດນາມ ກ່ຽວກັບການປະເມີນຮອບດ້ານວຽກງານພັດທະນາຕະຫຼາທຶນ ແລະ ການກຳນົດຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສສ.ຫວຽດນາມ ໃນເດືອນພະຈິກ 2024 ແລະ ກະກຽມການເຮັດວຽກກັບ ທະນາຄານພັດທະນາອາຊີໃນວຽກດັ່ງກ່າວ.

2. ມອບໃຫ້ ສຄຄຊ ຄົ້ນຄວ້າຮ່າງໜັງສືສະເໜີ ຫາ ທ່ານ ລັດຖະມົນຕີ ກະຊວງການເງິນ ເພື່ອພິຈາລະນາການຮັບຮອງຄຳແນະນຳມາດຕະຖານສາກົນດ້ານການບັນຊີ (IAS) ຈຳນວນ 21 ມາດຕະຖານ ເພື່ອເປັນບ່ອນອີງ

ໃຫ້ແກ່ວິສາຫະກິດໃນການຈັດຕັ້ງປະຕິບັດ ການຂ້າມຜ່ານໄປສູ່ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ຢູ່ ສປປ ລາວ;

➢ **ຄວາມຄືບໜ້າ**

- ສືບຕໍ່ຕິດຕາມທິດຊີ້ນຳຈາກ ທ່ານ ລັດຖະມົນຕີ ກະຊວງການເງິນ ໃນການພິຈາລະນາມີຄຳເຫັນຕໍ່ ຄຳແນະນຳມາດຕະຖານສາກົນດ້ານການບັນຊີ (IAS) ຈຳນວນ 21 ມາດຕະຖານ ເພື່ອເປັນບ່ອນອີງໃຫ້ແກ່ວິສາຫະກິດໃນການຈັດຕັ້ງປະຕິບັດ ການຂ້າມຜ່ານໄປສູ່ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ຢູ່ ສປປ ລາວ.

➢ **ແຜນການໃນຕໍ່ໜ້າ**

- ສືບຕໍ່ຕິດຕາມ ແລະ ຈັດຕັ້ງປະຕິບັດ ຕາມທິດຊີ້ນຳ ທ່ານ ລັດຖະມົນຕີ ກະຊວງການເງິນ ໃນການພິຈາລະນາມີຄຳເຫັນຕໍ່ ຄຳແນະນຳມາດຕະຖານສາກົນດ້ານການບັນຊີ (IAS) ຈຳນວນ 21 ມາດຕະຖານ ເພື່ອເປັນບ່ອນອີງໃຫ້ແກ່ວິສາຫະກິດໃນການຈັດຕັ້ງປະຕິບັດ ການຂ້າມຜ່ານໄປສູ່ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ຢູ່ ສປປ ລາວ.

3. ມອບໃຫ້ ສຄຄຊ ສືບຕໍ່ຄົ້ນຄວ້າການສ້າງກະດານຮອງ ຢູ່ ຕລຊລ ເປັນຕົ້ນ ການປັບປຸງ ແລະ ຄົ້ນຄວ້າລົງເລິກໃນບົດວິພາກເສດຖະກິດການສ້າງກະດານຮອງ;

➢ **ຄວາມຄືບໜ້າ**

- ສຳເລັດ ການລາຍງານ ຄະນະ ຜູ້ອຳນວຍການ ທຫລ ກ່ຽວກັບການປັບປຸງບົດຄົ້ນຄວ້າການພັດທະນາກະດານຮອງຕາມການປະກອບຄຳເຫັນຂອງຄະນະຮັບຜິດຊອບຄົ້ນຄວ້າສ້າງກະດານຮອງ.

➢ **ແຜນການໃນຕໍ່ໜ້າ**

- ຕິດຕາມຄຳເຫັນ ຄະນະຜູ້ອຳນວຍການ ທຫລ ກ່ຽວກັບການປັບປຸງບົດຄົ້ນຄວ້າການພັດທະນາກະດານຮອງຕາມການປະກອບຄຳເຫັນຂອງຄະນະຮັບຜິດຊອບຄົ້ນຄວ້າສ້າງກະດານຮອງ.

4. ມອບໃຫ້ ສຄຄຊ ສົມທົບ ກະຊວງການເງິນ ແລະ ຄະນະປະຕິຮູບລັດວິສາຫະກິດ ສືບຕໍ່ຄົ້ນຄວ້າການຫັນ ຫຼື ປະຕິຮູບລັດວິສາຫະກິດ ຜ່ານກົນໄກຕະຫຼາດທຶນ;

➢ **ຄວາມຄືບໜ້າ**

- ສຳເລັດຕິດຕາມການແຈ້ງຕອບຈາກ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ປະກັນໄພ ກະຊວງການເງິນ ກ່ຽວກັບການປະກອບຄຳເຫັນຕໍ່ບົດຄົ້ນຄວ້າການປະຕິຮູບລັດວິສາຫະກິດ ຜ່ານກົນໄກຕະຫຼາດທຶນ.

➢ **ແຜນການໃນຕໍ່ໜ້າ**

- ກະກຽມລາຍງານ ແລະ ນຳສົ່ງບົດຄົ້ນຄວ້າໃຫ້ຄະນະຮັບຜິດຊອບປະຕິຮູບລັດວິສາຫະກິດ ພາຍຫຼັງປັບປຸງຕາມຄຳເຫັນຂອງກົມ ປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ;
- ກະກຽມໄປແລກປ່ຽນບົດຮຽນຢູ່ ສສ. ຫວຽດນາມ ກ່ຽວກັບການຫັນລັດວິສາຫະກິດຜ່ານກົນໄກຕະຫຼາດທຶນ ໃນເດືອນ ພະຈິກ 2024.

5. ມອບໃຫ້ ສຄຄຊ ສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າຄວາມເປັນໄປໄດ້ໃນການກຳນົດມາດຖານເງື່ອນໄຂຂອງວິສາຫະກິດທີ່ຈະໄດ້ຮັບການສຳປະທານໂຄງການຂອງລັດ ຄວນເປັນບໍລິສັດມະຫາຊົນ;

➢ **ຄວາມຄືບໜ້າ**

- ຕິດຕາມທິດຊີ້ນຳທ່ານ ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ກຳມະການ ຄຄຊ ກ່ຽວກັບການສະເໜີພິຈາລະນາໃຫ້ທິດຊີ້ນຳ ກົມກ່ຽວຂ້ອງຂອງກະຊວງແຜນການ ແລະ ການລົງທຶນ ຮ່ວມເຮັດວຽກ ແລະ ສະໜອງຂໍ້ມູນໃຫ້ ກັບ ສຄຄຊ;

- ສືບຕໍ່ຄົ້ນຄວ້າການສ້າງເງື່ອນໄຂໃຫ້ວິສາຫະກິດທີ່ຕ້ອງການສຳປະທານໂຄງການຂອງລັດ ຕ້ອງໄດ້ຫັນເປັນບໍລິສັດມະຫາຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ.

➢ **ແຜນການໃນຕໍ່ໜ້າ**

- ຕິດຕາມແຈ້ງຕອບຈາກ ກົມສົ່ງເສີມການລົງທຶນ ໃນການພິຈາລະນາຮ່ວມເຮັດວຽກ ແລະ ສະໜອງຂໍ້ມູນໃຫ້ ກັບ ສຄຄຊ ເພື່ອປະກອບຂໍ້ມູນທີ່ຍັງບໍ່ທັນຄົບຖ້ວນເຂົ້າໃນບົດຄົ້ນຄວ້າການສ້າງເງື່ອນໄຂໃຫ້ວິສາຫະກິດທີ່ຕ້ອງການສຳປະທານໂຄງການຂອງລັດ ຕ້ອງໄດ້ຫັນເປັນບໍລິສັດມະຫາຊົນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບລາວ ຕາມທິດຊີ້ນຳຂອງຄະນະນຳ ກະຊວງແຜນການ ແລະ ການລົງທຶນ.

6. ມອບໃຫ້ ສຄຄຊ ສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າ ແລະ ປຶກສາຫາລື ເພື່ອອອກແຈ້ງການ ຫຼື ນິຕິກຳ ໃນການຜັນຂະຫຍາຍກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ມາດຕາ 180 ວັກທີ 2 ເພື່ອໃຫ້ບໍລິສັດມະຫາຊົນ ທີ່ມີຈຳນວນຜູ້ຖືຮຸ້ນເຫຼືອໜ້ອຍກວ່າ ສາມຄົນ ແລະ/ຫຼື ບໍ່ມີຈຸດປະສົງລະດົມທຶນຜ່ານຕະຫຼາດທຶນ ດຳເນີນການປ່ຽນແປງຮູບແບບເປັນບໍລິສັດ; ນອກຈາກນັ້ນ, ຄົ້ນຄວ້າສະເໜີຄວາມເປັນໄປໄດ້ໃນການລະດົມທຶນ ໂຄງການ ເກືອກາລີ ເຂົ້າຕະຫຼາດຫຼັກຊັບລາວ;

➢ **ຄວາມຄືບໜ້າ**

- ສືບຕໍ່ຕິດຕາມບໍລິສັດມະຫາຊົນຕາມແຈ້ງການສະບັບເລກທີ 311/ຈທວ, ລົງວັນທີ 25 ມິຖຸນາ 2024 ເລື່ອງ: "ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດເປັນຮູບແບບບໍລິສັດມະຫາຊົນ ກ່ອນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ 2022" ໃນການສະແດງເຈດຈຳນົງມາຍັງ ສຄຄຊ ວ່າ ມີຈຸດປະສົງໃນລະດົມທຶນຜ່ານຕະຫຼາດທຶນດ້ວຍການອອກຈຳໜ່າຍຮຸ້ນ ໃນຕໍ່ໜ້າ ຫຼື ບໍ່; ປັດຈຸບັນ ຍັງບໍ່ທັນມີບໍລິສັດໃດແຈ້ງເຈດຈຳນົງມາຫາກົມທີ່ກ່ຽວຂ້ອງ ຄື: ກົມທະບຽນວິສາຫະກິດ ແລະ ສຄຄຊ.

➢ **ແຜນການໃນຕໍ່ໜ້າ**

- ປະສານສົມທົບກັບກົມທະບຽນວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປຶກສາຫາລືວິທີການຈັດຕັ້ງປະຕິບັດ ກ່ຽວກັບ "ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດເປັນຮູບແບບບໍລິສັດມະຫາຊົນ ກ່ອນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ 2022" ທີ່ບໍ່ໄດ້ສະແດງເຈດຈຳນົງ ວ່າມີຈຸດປະສົງໃນການລະດົມທຶນຜ່ານຕະຫຼາດທຶນດ້ວຍການອອກຈຳໜ່າຍຮຸ້ນ ໃນຕໍ່ໜ້າ ຫຼື ບໍ່.

7. ມອບໃຫ້ ສຄຄຊ ສືບຕໍ່ຄົ້ນຄວ້າທົບທວນຄືນບັນດານິຕິກຳ ທີ່ຕິດພັນການອະນຸຍາດໃຫ້ບໍລິສັດຢູ່ ສປປ ລາວ ສາມາດໄປລະດົມທຶນຢູ່ຕ່າງປະເທດ.

➢ **ຄວາມຄືບໜ້າ**

- ຕິດຕາມຜົນການສະເໜີຂໍຂໍ້ມູນກັບ ກລຕ ແຫ່ງປະເທດໄທ, ຫວຽດນາມ ແລະ ສປ. ຈີນ ກ່ຽວກັບ ກົນໄກ, ເງື່ອນໄຂ ແລະ ພາລະບົດບາດການຄຸ້ມຄອງ ຫຼື ຕິດຕາມກວດກາ ຂອງແຕ່ລະປະເທດ ແລະ ພາກສ່ວນກ່ຽວຂ້ອງ ຂອງແຕ່ລະປະເທດ ໃນການອະນຸຍາດໃຫ້ ວິສາຫະກິດພາຍໃນໄປອອກຈຳໜ່າຍຮຸ້ນກູ້ ຢູ່ຕ່າງປະເທດ.

➢ **ແຜນການໃນຕໍ່ໜ້າ**

- ສືບຕໍ່ຕິດຕາມຜົນການສະເໜີຂໍຂໍ້ມູນກັບ ກລຕ ແຫ່ງປະເທດໄທ, ຫວຽດນາມ ແລະ ສປ. ຈີນ ກ່ຽວກັບ ກົນໄກ, ເງື່ອນໄຂ ແລະ ພາລະບົດບາດການຄຸ້ມຄອງ ຫຼື ຕິດຕາມກວດກາ ຂອງແຕ່ລະປະເທດ ແລະ ພາກສ່ວນກ່ຽວຂ້ອງ ຂອງແຕ່ລະປະເທດ ໃນການອະນຸຍາດໃຫ້ ວິສາຫະກິດພາຍໃນໄປອອກຈຳໜ່າຍຮຸ້ນກູ້ ຢູ່ຕ່າງປະເທດ ເພື່ອນຳໃຊ້ຂໍ້ມູນດັ່ງກ່າວ ເປັນບ່ອນອີງເຂົ້າໃນບົດຄົ້ນຄວ້າ ກ່ຽວກັບການອະນຸຍາດໃຫ້ບໍລິສັດໃນລາວ ໄປລະດົມທຶນຢູ່ຕ່າງປະເທດ.

8. ມອບໃຫ້ ສຄຄຊ ສືບຕໍ່ຄົ້ນຄວ້າກ່ຽວກັບຜະລິດຕະພັນໃໝ່ ໃຫ້ເຫັນໄດ້ຮູບແບບທີ່ເໝາະສົມສໍາລັບ ສປປ ລາວ, ເຫັນໄດ້ຜົນໄດ້ຮັບ ແລະ ຄວາມສ່ຽງຕ່າງໆໃນອະນາຄົດ ກ່ຽວກັບ ກອງທຶນເພື່ອການລົງທຶນຮ່ວມທຸລະກິດ (Venture Capital: VC) ແລະ ກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund: PE Fund) ຈາກນັ້ນ ຈຶ່ງຄົ້ນຄວ້າຮ່າງນິຕິກໍາ;

➢ **ຄວາມຄືບໜ້າ**

- ໄດ້ຕິດຕາມທິດຊີ້ນໍາຂອງ ທ່ານ ຮັກສາການຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈໍາການ ກ່ຽວກັບຜົນການສຶກສາຄົ້ນຄວ້າກ່ຽວກັບກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund) ແລະ ກອງທຶນຮ່ວມລົງທຶນ (Venture Capital) ຢູ່ ສປປ ລາວ ແລະ ການພິຈາລະນາຮັບຮອງບົດສຶກສາຄົ້ນຄວ້າ (ບົດວິພາກ) ກ່ຽວກັບວຽກງານດັ່ງກ່າວ. ຕໍ່ກັບ (ຮ່າງ) ຂໍ້ຕົກລົງວ່າດ້ວຍກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund) ແລະ ກອງທຶນຮ່ວມລົງທຶນ (Venture Capital) ແມ່ນຢູ່ໃນຂັ້ນຕອນການປະກອບຄໍາເຫັນຂອງຄະນະ ຄຄຊ.

➢ **ແຜນການໃນຕໍ່ໜ້າ**

- ສືບຕໍ່ຕິດຕາມທິດຊີ້ນໍາຂອງ ທ່ານ ຮັກສາການຜູ້ວ່າການ ທຫລ, ຮອງປະທານ ຄຄຊ ຜູ້ປະຈໍາການ ກ່ຽວກັບຜົນການສຶກສາຄົ້ນຄວ້າກ່ຽວກັບກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund) ແລະ ກອງທຶນຮ່ວມລົງທຶນ (Venture Capital) ຢູ່ ສປປ ລາວ ແລະ ການພິຈາລະນາຮັບຮອງບົດສຶກສາຄົ້ນຄວ້າ (ບົດວິພາກ) ກ່ຽວກັບວຽກງານດັ່ງກ່າວ;
- ສືບຕໍ່ປະສານສົມທົບກັບ ພະແນກນິຕິກໍາ ໃນການຄົ້ນຄວ້າປັບປຸງຕາມຄໍາເຫັນຂອງ ຄະນະ ຄຄຊ ຕໍ່ (ຮ່າງ) ຂໍ້ຕົກລົງວ່າດ້ວຍກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund) ແລະ ກອງທຶນຮ່ວມລົງທຶນ (Venture Capital);
- ສືບຕໍ່ຄົ້ນຄວ້າ ແລະ ກໍານົດເປົ້າໝາຍບໍລິສັດທີ່ຈະສ້າງຕັ້ງກອງທຶນ PE Fund ແລະ VC ພາຍຫຼັງນິຕິກໍາຖືກຮັບຮອງ ແລະ ສືບຕໍ່ກະກຽມນໍາສິ່ງໜັງສືສະເໜີຂໍເຂົ້າພົບ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເພື່ອຊຸກຍູ້ ແລະ ນໍາສະເໜີອະທິບາຍຊີ້ແຈງ ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈເລິກເຊິ່ງຕໍ່ຮູບແບບຂັ້ນຕອນໃນການສ້າງຕັ້ງ ແລະ ຜົນປະໂຫຍດທີ່ຈະໄດ້ຮັບໃນການສ້າງຕັ້ງບໍລິສັດກອງທຶນເພື່ອການລົງທຶນ ເພື່ອປຶກສາແລກປ່ຽນກ່ຽວກັບວຽກງານການຄຸ້ມຄອງກອງທຶນອື່ນໆ.

9. ມອບໃຫ້ ສຄຄຊ ສືບຕໍ່ຊຸກຍູ້ວິສາຫະກິດທີ່ມີທ່າແຮງ ໃຫ້ສາມາດຄົ້ນຄວ້າສະເໜີອອກຈໍາໜ່າຍຮຸ້ນກູ້ ສີຂຽວ, ສັງຄົມ ແລະ ຍືນຍົງ ຢູ່ ຕະຫຼາດຫຼັກຊັບລາວ ພ້ອມນີ້ ການຈັດຕັ້ງປະຕິບັດຕົວຈິງ ສຄຄຊ ຈະຕ້ອງປະສານສົມທົບກັບ ພາກສ່ວນຮັບຜິດຊອບ ວຽກງານຄຸ້ມຄອງໜີ້ສິນຕ່າງປະເທດ ຂອງ ສປປ ລາວ;

➢ **ຄວາມຄືບໜ້າ**

- ປະສານສົມທົບກັບສະຖາບັນເຕີບໂຕສີຂຽວ (GGGI) ໃນການຕິດຕາມ ແລະ ຊຸກຍູ້ທະນາຄານສົ່ງເສີມກະສິກໍາໃນການສຶກສາຄວາມເປັນໄປໄດ້ໃນການອອກຈໍາໜ່າຍຮຸ້ນກູ້ສີຂຽວ, ສັງຄົມ ແລະ ຍືນຍົງ ແລະ ຄົ້ນຄວ້າຈັດກອງປະຊຸມ ເພື່ອຊຸກຍູ້ ບໍລິສັດຫຼັກຊັບ ລົງພົບປະເຮັດວຽກ ບໍລິສັດໂລກາ ໃນການອອກຈໍາໜ່າຍຮຸ້ນກູ້ສີຂຽວ.

➢ **ແຜນການໃນຕໍ່ໜ້າ**

- ສືບຕໍ່ຕິດຕາມຊຸກຍູ້ ແລະ ຄົ້ນຄວ້າເປົ້າໝາຍວິສາຫະກິດໃນການອອກຈໍາໜ່າຍ, ບໍລິສັດ ໂລກາ ລາວ ທີ່ໄດ້ສະແດງເຈດຈໍານົງສົນໃຈອອກຈໍາໜ່າຍຮຸ້ນກູ້ສີຂຽວ ເພື່ອນໍາທຶນມາຂະຫຍາຍທຸລະກິດເພື່ອສ້າງສະຖານີສາກໄຟ ລົດໄຟຟ້າທົ່ວປະເທດ ແລະ ທະນາຄານສົ່ງເສີມກະສິກໍາ ທີ່ກໍາລັງຈະເຮັດວຽກຮ່ວມກັບສະຖາບັນເຕີບໂຕສີຂຽວ (GGGI) ເພື່ອສຶກສາຄວາມເປັນໄປໄດ້ໃນການອອກຈໍາໜ່າຍຮຸ້ນກູ້ສີຂຽວ.

10. ມອບໃຫ້ ສຄຄຊ ຕິດຕາມ ແລະ ປະເມີນຜົນ ການນຳໃຊ້ທຶນ ທີ່ລະດົມຈາກການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ;

➢ **ຄວາມຄືບໜ້າ**

- ສືບຕໍ່ຕິດຕາມ ແລະ ປະເມີນຜົນ ການນຳໃຊ້ທຶນ, ການຊຳລະຕົ້ນທຶນ ແລະ ດອກເບ້ຍຮຸ້ນກູ້ ທີ່ລະດົມຈາກການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເປັນປົກກະຕິແຕ່ລະໄລຍະ ຕິດຕາມທິດຊີ້ນຳ ທ່ານ ຮອງຜູ້ວ່າການ ທຫລ ໃນການໃຫ້ ສຄຄຊ ຕິດຕາມ ແລະ ລາຍງານຢ່າງເປັນປົກກະຕິ ທຸກໆໄຕມາດ.

➢ **ແຜນການໃນຕໍ່ໜ້າ**

- ສືບຕໍ່ຕິດຕາມ ແລະ ປະເມີນຜົນ ການນຳໃຊ້ທຶນ, ການຊຳລະຕົ້ນທຶນ ແລະ ດອກເບ້ຍຮຸ້ນກູ້ ທີ່ລະດົມຈາກການອອກຈຳໜ່າຍຮຸ້ນກູ້ໃນວົງຈຳກັດ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເປັນປົກກະຕິແຕ່ລະໄລຍະ ຕິດຕາມທິດຊີ້ນຳ ທ່ານ ຮອງຜູ້ວ່າການ ທຫລ ໃນການໃຫ້ ສຄຄຊ ຕິດຕາມ ແລະ ລາຍງານຢ່າງເປັນປົກກະຕິ ທຸກໆໄຕມາດ.

11. ມອບໃຫ້ ສຄຄຊ ສືບຕໍ່ຊຸກຍູ້ການພັດທະນາລະບົບຊື້ຂາຍຮຸ້ນຜ່ານມືຖື (Mobile Trading System) ເພື່ອໃຫ້ຜູ້ລົງທຶນເຂົ້າເຖິງບໍລິການຕະຫຼາດທຶນໄດ້ຄ່ອງຕົວຂຶ້ນ;

➢ **ຄວາມຄືບໜ້າ**

- ອີງຕາມຜົນການລາຍງານກອງປະຊຸມ ຄັ້ງວັນທີ 28 ສິງຫາ 2024 ລະຫວ່າງ ສຄຄຊ, ຕລຊລ, ທຄຕລ ແລະ ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ ແມ່ນໄດ້ສຳເລັດການເຊື່ອມຕໍ່ລະບົບຖານຂໍ້ມູນເຊິ່ງເປັນລະບົບເກັບກຳ Portfolio ຂອງການລົງທຶນ, ພ້ອມທັງ ໄດ້ທົດລອງລະບົບດັ່ງກ່າວ ແລະ ສຳເລັດການພັດທະນາໃນສ່ວນຂອງ Coding ເປັນຕົ້ນແມ່ນ: ການສ້າງຖານຂໍ້ມູນ ແລະ ຄວາມຕ້ອງການຕ່າງໆແມ່ນສຳເລັດແລ້ວປະມານ 22%. ໂດຍລວມການພັດທະນາລະບົບດັ່ງກ່າວແມ່ນ ສຳເລັດແລ້ວ ກວມເອົາ 60% ແລະ ວາງຄາດໝາຍສູ້ຊົນໃຫ້ສຳເລັດພ້ອມເປີດໃຫ້ໄດ້ໃຊ້ງານ ພາຍໃນໄຕມາດ 4 ປີ 2024;
- ຕິດພັນກັບເບື້ອງ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ (ບລຈ) ແລະ ບໍລິສັດຫຼັກຊັບ ແອສ໌ດີບີ ຈຳກັດຜູ້ດຽວ ປັດຈຸບັນ ແມ່ນສືບຕໍ່ຕິດຕາມ ບໍລິສັດ Hi think ຜູ້ພັດທະນາລະບົບ ແລະ ໜ່ວຍງານໄອທີ ຕລຊລ ແລກປ່ຽນຂໍ້ມູນ ເພື່ອເຊື່ອມຕໍ່ເຂົ້າລະບົບທົດສອບຂອງຕະຫຼາດຫຼັກຊັບເກົາຫຼີ (KRX) ເນື່ອງຈາກວ່າ ລະບົບຂອງ ຕລຊລ ເປັນລະບົບເກົ່າ ແຕ່ລະບົບຂອງຜູ້ພັດທະນາເປັນລະບົບໃໝ່ ຈຶ່ງມີຄວາມຈຳເປັນທີ່ຕ້ອງໄດ້ທົດລອງລະບົບໃຫ້ເຊື່ອມຕໍ່ກັນໄດ້ດີກ່ອນຈະເຊັນສັນຍາຮ່ວມກັນ ຄາດໝາຍສູ້ຊົນໃຫ້ສຳເລັດພາຍໃນໄຕມາດ 4 ປີ 2024.

➢ **ແຜນການໃນຕໍ່ໜ້າ**

- ສືບຕໍ່ຕິດຕາມຊຸກຍູ້ ແລະ ປະສານງານກັບ ຕລຊລ ແລະ ບັນດາບໍລິສັດຫຼັກຊັບ (ທຄຕລ-ກທ, ບລຈ) ກ່ຽວກັບຄວາມຄືບໜ້າຂອງການພັດທະນາລະບົບຊື້ຂາຍຫຼັກຊັບຜ່ານມືຖື (Mobile App Trading System).

12. ເຫັນດີອະນຸຍາດໃຫ້ ສຄຄຊ ຈັດກອງປະຊຸມຮ່ວມກັບກົມກ່ຽວຂ້ອງທີ່ເປັນຈຸດໃຈກາງປະສານງານວຽກງານຕະຫຼາດທຶນ ໃນການຄົ້ນຄວ້າປະກອບຄຳເຫັນຕໍ່ຮ່າງນິຕິກຳ ຂອງ ຄຄຊ ໂດຍໃຫ້ຜ່ານ ທ່ານ ຮອງຜູ້ວ່າການ ທຫລ, ກຳມະການ ຄຄຊ ໃນແຕ່ລະຄັ້ງ;

➢ **ຄວາມຄືບໜ້າ**

ໄດ້ສຳເລັດການຈັດກອງປະຊຸມຮ່ວມກັບພາກສ່ວນກ່ຽວຂ້ອງທີ່ເປັນຈຸດໃຈກາງປະສານງານໃນວຽກງານການສ້າງ ແລະ ປັບປຸງ ແລະ ໄດ້ນຳສະເໜີຜ່ານນິຕິກຳຄື:

- ຂໍ້ຕົກລົງວ່າດ້ວຍ ການອອກຈຳໜ່າຍຮຸ້ນ (ສະບັບປັບປຸງ);
- ຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານ (ສະບັບປັບປຸງ);

- ຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ເປີດເຜີຍຂໍ້ມູນ (ສະບັບປັບປຸງ); ປັດຈຸບັນ ຢູ່ໃນຂັ້ນຕອນການປະກອບຄໍາເຫັນຂອງ ຄະນະ ຄຄຊ.

➢ **ແຜນການໃນຕໍ່ໜ້າ**

- ຕິດຕາມ, ສັງລວມ ແລະ ຄົ້ນຄວ້າຄໍາເຫັນຂອງ ຄະນະ ຄຄຊ ຕໍ່ກັບ (ຮ່າງ) ຂໍ້ຕົກລົງ 3 ສະບັບ ດັ່ງກ່າວ.

13. ເຫັນດີອະນຸຍາດໃຫ້ ສຄຄຊ ເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືສອງຝ່າຍ (MOU) ກັບ ສະຖາບັນການເຕີບໂຕສີຂຽວສາກົນ (Global Green Growth Institute (GGGI));

➢ **ຄວາມຄືບໜ້າ**

- ສໍາເລັດການລົງນາມເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ສຄຄຊ ແລະ ສະຖາບັນເຕີບໂຕສີຂຽວ (GGGI) ໃນວັນທີ 10 ຕຸລາ 2024.

14. ມອບໃຫ້ ສຄຄຊ ແລະ ຕລຊລ ຄົ້ນຄວ້າຂະຫຍາຍຖານຜູ້ລົງທຶນ ໂດຍສະເພາະຜູ້ລົງທຶນປະເພດສະຖາບັນ ເປັນຕົ້ນ: ບໍລິສັດປະກັນໄພ;

➢ **ຄວາມຄືບໜ້າ**

- ສໍາເລັດ ການປະຊຸມປຶກສາຫາລືຮ່ວມກັບກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ ເພື່ອແລກປ່ຽນຄໍາຄິດຄໍາເຫັນກ່ຽວກັບການຊຸກຍູ້ບໍລິສັດປະກັນໄພເຂົ້າມາມີສ່ວນຮ່ວມໃນຕະຫຼາດທຶນໂດຍສະເພາະພັນທະບັດລັດຖະບານ ແລະ ສໍາເລັດການລາຍງານ ຄະນະ ສຄຄຊ ກ່ຽວກັບຜົນຂອງການປະຊຸມດັ່ງກ່າວ.

➢ **ແຜນການໃນຕໍ່ໜ້າ**

- ອີງຕາມແຜນການເຄື່ອນໄຫວຂອງບໍລິສັດປະກັນໄພ ແມ່ນຈະມີການປັບປຸງໂຄງສ້າງຂອງບໍລິສັດ ຊຶ່ງຄາດວ່າຈະສໍາເລັດພາຍໃນປີ 2025.

❖ **<u>ມະຕິກອງປະຊຸມຕິດພັນກັບຕະຫຼາດຫຼັກຊັບລາວ:</u>**

1. ມອບໃຫ້ ຕລຊລ ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າປະເມີນຄືນ ກ່ຽວກັບຜົນການດໍາເນີນງານຂອງ ຕລຊລ ໃນໄລຍະຜ່ານມາ ແລະ ການກໍານົດທິດທາງໃນຕໍ່ໜ້າ ເພື່ອສ້າງຄວາມເຂັ້ມແຂງໃຫ້ ຕລຊລ;

**1) ຄົ້ນຄວ້າປະເມີນຄືນກ່ຽວກັບຜົນການດໍາເນີນງານຂອງ ຕລຊລ ໃນໄລຍະຜ່ານມາ**

ຕລຊລ ໄດ້ຄົ້ນຄວ້າປະເມີນຄືນກ່ຽວກັບຜົນການດໍາເນີນງານຂອງ ຕລຊລ ໂດຍສົມທົບກັບພາກສ່ວນກ່ຽວຂ້ອງໃນໄລຍະຜ່ານມາ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ດ້ານການເພີ່ມຜະລິດຕະພັນຫຼັກຊັບ ຍັງຈໍາກັດ, ບໍ່ຫຼາກຫຼາຍ.
- ດ້ານການຊື້ ຂາຍ ຫຼັກຊັບ ຍັງບໍ່ທັນມີສະພາບຄ່ອງ ເນື່ອງຈາກຜົນປະກອບການຂອງບໍລິສັດຈົດທະບຽນຍັງບໍ່ດີເທົ່າທີ່ຄວນ.
- ຊ່ອງທາງການລົງທຶນຮຸ້ນຍັງບໍ່ທັນສະໄໝ ແລະ ບໍ່ສອດຄ່ອງຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ.
- ນັກລົງທຶນສະຖາບັນຍັງບໍ່ທັນປະກອບສ່ວນຢ່າງແຂງແຮງ.

**2) ການກໍານົດທິດທາງໃນຕໍ່ໜ້າ ເພື່ອສ້າງຄວາມເຂັ້ມແຂງໃຫ້ ຕລຊລ**

❖ **ດ້ານການເພີ່ມຜະລິດຕະພັນຫຼັກຊັບ**

- ຕລຊລ ສືບຕໍ່ຕິດຕາມກັບພາກສ່ວນກ່ຽວຂ້ອງ ກ່ຽວກັບຄວາມຄືບໜ້າ ການສະເໜີ ລັດຖະບານຊຸກຍູ້ 6 ຫົວໜ່ວຍລັດວິສະຫະກິດ ໃຫ້ອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນໃນ ຕລຊລ ຄື: 1) ບໍລິສັດ ເບຍລາວ , 2) ເຂດໂລຈິດສະຕິກ ນະຄອນຫຼວງວຽງຈັນ, 3) ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ, 4) ບໍລິສັດ ທາງລົດໄຟ ລາວຈີນ ຈໍາກັດ, 5) ບໍລິສັດ ສະຕາ ໂທລະຄົມ ຈໍາກັດ ແລະ 6) ທະນາຄານພັດທະນາລາວ. ພ້ອມທັງ, ສືບຕໍ່ສົມທົບກັບບໍລິສັດຫຼັກຊັບ ກະກຽມເປົ້າໝາຍບໍລິສັດຈົດທະບຽນ ແລະ

ການຈົດທະບຽນໃນ ຕລຊລ ສາມາດຄັດຈ້ອນເປົ້າໝາຍ ປະກອບມີ: 1) ບໍລິສັດຫຼັກຊັບ ລາວ-ຈີນ, 2) ບໍລິສັດ ຫຼວງປະເສີດ, 3) ບໍລິສັດ ຍອດງື່ມ ພາວເວີ ມະຫາຊົນ ແລະ 4) ໂຮງງານ ນ້ຳດື່ມແຮ່ທາດທຳມະຊາດ ມີເນໂຣ.

- ຄົ້ນຄວ້າສະເໜີຂັ້ນເທິງກ່ຽວກັບການອອກຈຳໜ່າຍໃບຢັ້ງຢືນຄຳຜ່ານ ຕລຊລ.

❖ **ດ້ານການຊື້ ຂາຍ ຫຼັກຊັບ**

- ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຊຸກຍູ້ບໍລິສັດຫຼັກຊັບ ໃຫ້ເປັນຜູ້ສະໜອງສະພາບຄ່ອງ ແລະ ສ້າງສະພາບຄ່ອງໃຫ້ແກ່ຮຸ້ນຈົດທະບຽນໃນ ຕລຊລ.
- ສືບຕໍ່ສົມທົບກັບພາກສ່ວນກ່ຽວຂ້ອງໃນການສ້າງກິດຈະກຳໂຄສະນາການເປີດບັນຊີຫຼັກຊັບ ແລະ ການ ຊື້ ຂາຍ ຫຼັກຊັບ ຜ່ານຊ່ອງທາງອອນລາຍ ແລະ ການຕັ້ງໂຊນວາງສະແດງ ຕາມສະຖານທີ່ຕ່າງໆ.

❖ **ຊ່ອງທາງການລົງທຶນຮຸ້ນ**

- ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຊຸກຍູ້ບໍລິສັດຫຼັກຊັບ ໃນການສ້າງ Mobile Trading Application.

❖ **ການຊຸກຍູ້ນັກລົງທຶນສະຖາບັນ**

- ສົມທົບກັບສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການຊຸກຍູ້ການລົງທຶນຂອງບັນດາສະຖາບັນການເງິນ, ບໍລິສັດປະກັນໄພ ແລະ ອື່ນໆ. ພ້ອມທັງ, ຊຸກຍູ້ບໍລິສັດຫຼັກຊັບໃນການສ້າງກອງທຶນເພື່ອການລົງທຶນຮ່ວມທຸລະກິດ (Venture Fund), ກອງທຶນຮ່ວມລົງທຶນໃນບໍລິສັດ (Private Equity Fund).

## II. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີ

### 1. ຂໍ້ສະດວກ

- ສຄຄຊ ໄດ້ຮັບການຊີ້ນຳ-ນຳພາຢ່າງໃກ້ສິດຈາກ ຄະນະ ຄຄຊ ແລະ ຄະນະຜູ້ອຳນວຍການ ທຫລ ເປັນຢ່າງດີ;
- ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການປະຕິບັດວຽກງານຕາມໜ້າທີ່ການເມືອງຂອງຕົນ ພ້ອມທັງປະສານສົມທົບກັນ ໃນແຕ່ລະໄລຍະ.

### 2. ຂໍ້ຫຍຸ້ງຍາກ

- ບາງຄັ້ງການປະກອບຄຳເຫັນຈາກພາກສ່ວນກ່ຽວຂ້ອງ ຍັງຊັກຊ້າ ແລະ ແກ່ຍາວ ເຮັດໃຫ້ວຽກງານບໍ່ສາມາດປະຕິບັດໄດ້ຕາມຄາດໝາຍທີ່ກຳນົດໄວ້;
- ພາກສ່ວນກ່ຽວຂ້ອງທີ່ເປັນຜູ້ຄຸ້ມຄອງຫຼັກ ຍັງບໍ່ເຫັນຄວາມສຳຄັນ ແລະ ຈຳເປັນແທ້ ກ່ຽວກັບບັນຫາໜ້າວຽກທີ່ຕິດພັນກັບວຽກງານຕະຫຼາດທຶນ ເປັນຕົ້ນແມ່ນ ການຈັດຕັ້ງປະຕິບັດມາດຕະຖານ IFRS;
- ການເຂົ້າເຖິງແຫຼ່ງຂໍ້ມູນທີ່ຈະນຳມາຄົ້ນຄວ້າຍັງມີຂອດຈຳກັດ ເນື່ອງຈາກ ຂໍ້ມູນຕ່າງໆຍັງບໍ່ທັນໄດ້ມີການເປີດເຜີຍໂດຍທົ່ວໄປ;
- ຈຳນວນພະນັກງານບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ ໂດຍສະເພາະໃນໄລຍະທີ່ມີການຄົ້ນຄວ້າປັບປຸງວຽກງານໃໝ່ໆ, ການເປັນເຈົ້າພາບ ແລະ ປະທານກອງປະຊຸມ ACMF ໃນປີ 2024.

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານມາຍັງທ່ານ ເພື່ອຊາບ ແລະ ມີທິດຊີ້ຕາມທາງຄວນດ້ວຍ.

**ຫົວໜ້າ ສຳນັກງານ**

ສຽວສະຫວາດ ທີລະກຸນ